**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 23 ພຶສພາ 2010 (05-23-2010)**

---

**<u>ຂ້ອຍຂໍສາບານວ່າຈະສັດຊື່ຕໍ່ເຈົ້າ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ມັດທາຍ 5:27-30; ສຸພາສິດ 5:15-21; 6:25-32)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ແມ່ນກ່ຽວກັບຄຳບັນຊາຂອງພຣະເຈົ້າໃຫ້ສັດຊື່ໃນຊີວິດແຕ່ງງານ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ຄວາມກົດດັນທາງສັງຄົມເປັນຮາກຖານ-ອັນເລິກທີ່ທ້າທາຍໃຫ້ມີແນວຄິດກ່ຽວກັບທຳມະຊາດຂອງຄວາມສັດຊື່ໃນຊີວິດແຕ່ງງານ. ສມັຍນີ້, ອິນເທີແນັດກໍເປັນຊ່ອງທາງນຳໜ້າຊັກນຳໄປສູ່ຄວາມບໍ່ສັດຊື່ກັບສາຍສຳພັນອັນບໍ່ແມ່ນຂອງແທ້ທີ່ປາກົດອອກມາທາງສາຍອາກາດແລະເປັນທາງອັນຍິ່ງໃຫຍ່ເຂົ້າສູ່ການເບິ່ງໜັງລາມົກ. ຄວາມບໍ່ສັດຊື່ຕໍ່ຊີວິດແຕ່ງງານສາມາດມາໃນຮູບແບບການຫຼິ້ນຊູ້ທາງໃຈຫຼືຄວາມຮູ້ສຶກເປັນນຶ່ງດຽວກັນກັບບາງຄົນນອກຈາກຄູ່ຄອງຂອງທ່ານ. ມາດຕະຖານຂອງພຣະເຈົ້າບໍ່ໄດ້ປ່ຽນແປງ. ຝ່າຍພວກຜົວແລະເມັຽທັງຫຼາຍຕ້ອງສັດຊື່ຕໍ່ກັນແລະກັນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ວຍພວກທີ່ເຖິງກະສຽນໃຫ້ມອງເຫັນວ່າການບໍ່ສັດຊື່ໃນຊີວິດແຕ່ງງານສາມາດມີມາໄດ້ຫຼາຍແບບ. ພວກຜົວແລະເມັຍທັງຫຼາຍຈະໄດ້ຮັບຄຳໜູນໃຈທີ່ຈະເຮັດໃຫ້ຄຳສັນຍາທີ່ຈະສັດຊື່ໃນຊີວິດແຕ່ງງານຂອງພວກເຂົາຄົບເຕັມສົມບູນ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ຫົວຂໍ້ບົດຮຽນມື້ນີ້ແມ່ນໃຫ້ຈົດຈໍ່ໃສ່ຄວາມສັດຊື່. ໃນຂນະທີ່ທາງຝ່າຍໂລກໄດ້ຈ້ອງເບິ່ງການທ້າທາຍກ່ຽວກັບການແຕ່ງງານທີ່ສັດຊື່ຢູ່ນີ້, ພວກຄຣິສຕຽນບໍ່ຄວນເມີນເສີຍລະເລີຍຕໍ່ການຕໍ່ສູ້ ເພື່ອໃຫ້ເປັນການເຄົາຣົບສິດທິຂອງການແຕ່ງງານ. ພວກເຮົາຕ້ອງເສີມກຳລັງຂອງພຣະເຈົ້າ ເພື່ອໃຫ້ການແຕ່ງງານໄດ້ຮັບການສຶກສາໂດຍຜ່ານບົດຮຽນມື້ນີ້.

- ໃນໂລກນີ້ ໄດ້ສົ່ງເສີມການກະທຳຕາມໃຈຕົນເອງ ແລະຄວາມພໍອົກພໍໃຈໃຫ້ກັບຕົນເອງ ໂດຍບໍ່ຄຳນຶງເຖິງຜົນທີ່ຈະຕາມມາ.

## 1. <u>ຫລີກເວັ້ນການຫລິ້ນຊູ້ທາງໃຈ:</u> (ມັດທາຍ 5:27-30)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມັດທາຍ 5:27-30 ຊຶ່ງພຣະເຢຊູໄດ້ຊົງສອນໄວ້ວ່າຣາຄະຕັນຫາເປັນບໍ່ເກີດທີ່ນຳໄປສູ່ການຫລິ້ນຊູ້.
- ໃນສມັຍນີ້ ຈະເຮັດແນວໃດພວກເຮົາຈຶ່ງຈະຫລີກເວັ້ນຈາກຣາຄະຕັນຫານີ້ໄດ້? ອອກຄວາມຄິດຄວາມເຫັນຊ່ອຍກັນເບິ່ງ.
- ພວກເຮົາຕ້ອງປ້ອງກັນຄວາມຄິດຂອງພວກເຮົາໂດຍ ການຣະວັງສິ່ງທີ່ຕາຂອງພວກເຮົາເຫັນ.
- ການປົກປ້ອງຊີວິດການແຕ່ງງານຂອງພວກເຮົາໃຫ້ດີ, ບໍ່ພຽງແຕ່ສຶກສາ ການບຳຣຸງ ໃນສາຍສັມພັນຕໍ່ກັນແລະກັນເທົ່ານັ້ນ; ໃຫ້ເອົາການປ້ອງກັນທຸກສິ່ງທີ່ຈະມາຂັດຂວາງຕໍ່ສູ້ທີ່ຈະຊັກຈູງນຳພາພວກເຮົາໃຫ້ຍອມໄປສູ່ການຫລິ້ນຊູ້.
- ໃຫ້ນັກຮຽນຜູ້ນຶ່ງອ່ານຂໍ້ 29-30 ຊຶ່ງໃນການສັ່ງສອນຂອງພຣະເຢຊູນັ້ນໄດ້ຍົກເອົາຕົວຢ່າງເຫລົ່ານີ້ຂຶ້ນມາເພື່ອໃຫ້ເຫັນໄດ້ຢ່າງແຈ່ມແຈ້ງ. ຊຶ່ງໃນການສອນຂອງພຣະເຢຊູນັ້ນ ພຣະອົງບໍ່ໄດ້ຊົງທຳໃຫ້ພວກເຮົາສູນເສັຽສິ່ງນຶ່ງສິ່ງໃດເລີຍ. ສິ່ງທີ່ພຣະອົງບອກໃຫ້ພວກເຮົາເຮັດນັ້ນ ແມ່ນຫຍັງກັນແທ້?
- ໃນເມື່ອການທົດລອງ ການຫລອກລວງເຂົ້າມາໃນຊີວິດຂອງທ່ານແລ້ວ ແມ່ນຫຍັງທີ່ທ່ານຈະຕ້ອງໄດ້ເອົາອອກກ່ອນ ຕາເບື້ອງຂວາ ຫລື ຕັດມືຂວາຂອງທ່ານອອກ.

## <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (ມັດທາຍ 5:27-30)

1. ປະສາດ ຫລືອາຣົມທີ່ມີຄວາມໄຝ່ຝັນເຣື່ອງຄວາມສັມພັນທາງເພດກັບຄົນອື່ນເປັນການຫລິ້ນຊູ້ໄດ້ແນວໃດ?
2. ເປັນຫຍັງພຣະເຢຊູຈຶ່ງວ່າ ທຸກຄົນທີ່ເບິ່ງຜູ້ຍິງດ້ວຍໃຈກຳໜັດ ຜູ້ນັ້ນກໍໄດ້ຫລິ້ນຊູ້ທາງໃຈກັບຍິງນັ້ນແລ້ວ?
3. ເຖິງແມ່ນມີບັນຫາໃນຊີວິດການແຕ່ງງານຍັງຄົງດຳຣົງຢູ່ນັ້ນແມ່ນອັນໃດທີ່ພາໃຫ້ມີການຫລິ້ນຊູ້ທາງໃຈ?
4. ແມ່ນຫຍັງທີ່ເຮົາຄວນຣະວັງ ແລະປ້ອງກັນການພົວພັນໃນການສັມພັນກັບຄົນອື່ນຫລາຍກວ່າສາມີພັລຍາຂອງພວກເຮົາ?

## 2. <u>ຊອກຫາຄວາມເພິ່ງພໍໃຈໃນຕົວຄູ່ຄອງຂອງທ່ານ:</u> (ສຸພາສິດ 5:15-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ສຸພາສິດ 5:15-21
- ຈົ່ງສັງເກດເບິ່ງ ກະສັດຊາໂລໂມນໄດ້ຜູ້ທີ່ມີເມັຽຫລາຍຄົນ ແຖມຍັງເປັນຄົນທີ່ຢູ່ໃນຄວາມຮັ່ງມີທີ່ສຸດ. ແຕ່ເຖິງປານນັ້ນລາວຍັງມີຄວາມຊອກສແວງຫາຢູ່ບໍ່ເຊົາ ໂດຍບໍ່ພໍຈັກເທື່ອ ພວກລູກໆຂອງລາວໄດ້ມີຄວາມສົນໃຈໃນການແຕ່ງງານຂອງລາວຊຶ່ງລາວມີ ເມັຽເຖິງ 700 ຄົນ ແລະນາງບຳເລີ (ເມັຽນ້ອຍທີ່ບໍ່ໄດ້ແຕ່ງງານນຳອີກເຖິງ 300 ຄົນ)
- ຜູ້ຂຽນໄດ້ປຽບທຽບຄວາມຮັກຕໍ່ພັລຍາເໝືອນດັ່ງກວາງນ້ອຍ ແລະຄວາມສງ່າງາມ. ເປັນຄຳທີ່ບໍ່ແນ່ນອນທີ່ພວກເຮົາຈະນຳມາໃຊ້ປຽບທຽບກັບຜູ້ທີ່ພວກເຮົາຮັກໃນສມັຍນີ້. ແຕ່ມະນຸດທີ່ຖືກສ້າງຂຶ້ນ ໄດ້ພາກັນຮູ້ຈັກຄວາມສວຍງາມຂອງເຂົາເຈົ້າຢູ່ແລ້ວ. ແມ່ນຫຍັງທີ່ທ່ານສາມາດເອົາມາປຽບທຽບໃສ່ກັບຄົນໃນຍຸກປະຈຸບັນນີ້?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ສຸພາສິດ 5:15-21)

1. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງວາງແຜນການສຳລັບຄວາມສໍ້າເຣັດໃນທາງເພດໃຫ້ບັນລຸທາງການພົວພັນໃກ້ຊິດແຕ່ທາງການແຕ່ງງານເທົ່ານັ້ນ?
2. ແມ່ນຫຍັງທີ່ໂລກໄດ້ເຮັດໃຫ້ຄວາມຄິດເຂວໄປຈາກຄວາມຕ້ອງການຂອງສາມີພັລຍາຂອງພວກເຮົາ?
3. ເປັນເພາະເຫດໃດຄູ່ສົມຣົດໜຸ່ມສາວທີ່ແຕ່ງງານກັນບໍ່ພໍເທົ່າໃດ ບາງຄັ້ງກໍທອດຖິ້ມ, ມອງຂ້າມຄວາມໃກ້ຊິດສນິດສນົມໃນຊີວິດການສົມຣົດຂອງເຂົາເຈົ້າໄປ?

3 . **ມອງເຫັນສິ່ງທີ່ເປັນພັຍອັນຕະຣາຍ:** (ສຸພາສິດ 6:25-32)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ສຸພາສິດ 6:25-32
- ບໍ່ມີໃຜທີ່ຈະບໍ່ເຈີກັບການທົດລອງ ຫລອກລວງໃຫ້ຫລົງທາງຈາກຄວາມສັດຊື່ໄປໄດ້. ຊາຕານໄດ້ມີປະສົບການເຄີຍໄດ້ຊັຍຊະນະໃນຊີວິດຄອບຄົວຂອງອາຈານ, ແລະຄົນໃນໂບດມາແລ້ວ. ເຖິງຢ່າງໃດກໍຕາມພຣະເຈົ້າກໍຈະນຳເອົາຊີວິດການແຕ່ງງານຂອງເຂົາເຈົ້າກັບມາໄດ້ ແລະເຂົາເຈົ້າກໍກັບກາຍມາເປັນຜູ້ຮັບໃຊ້ໃນການຊ່ອຍເຫລືອໃນດ້ານອື່ນໄດ້ໂດຍຜ່ານທາງຄວາມເຊື່ອພາຍໃນຈິດໃຈອັນແທ້ຈິງ.
- ທ່ານເຊື່ອບໍ່ວ່າທ່ານຣິດຊາດຣ໌ ຣາຣີສັນ ໄດ້ຕຶກຕອງວ່າແມ່ນຫຍັງທີ່ເປັນຫລັກທີ່ລາວໄດ້ເລືອກໃນເຣື່ອງຊູ້ສາວ?
- ເປັນຫຍັງຄູ່ສົມຣົດໃໝ່ຈຶ່ງບໍ່ມັກຈົດຈຳຂອງຄວາມຜິດພາດໃນຄວາມສັດຊື່?
- ຄວາມບໍ່ສັດຊື່ ສາມາດເຮັດໃຫ້ເສັຽຫາຍຫລາຍກວ່າການຫາມາໄດ້ ບໍ່ພຽງແຕ່ເສັຽເງິນ ເສັຽທອງເທົ່ານັ້ນມັນຍັງສາມາດເຮັດໃຫ້ເສັຽສຸຂພາບ, ເສັຽຄວາມສັມພັນ ແລະຊື່ສຽງອີກດ້ວຍ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ສຸພາສິດ 6:25-32

1. ແມ່ນການປົວແປງ ການເຕືອນຄູ່ສົມຣົດໃຫ້ພິຈາຣະນາເບິ່ງການຫລິ້ນຊູ້ທີ່ໂຊໂລໂມນໃຫ້ມານັ້ນແມ່ນຫຍັງ?
2. ຜົນທີ່ຕາມມາທີ່ເປັນອັນຕະຣາຍທີ່ສຸດ ທີ່ໂຊໂລໂມນໄດ້ຊີ້ໃຫ້ເຫັນຢູ່ໃນຂໍ້ພຣະທັມເຫລົ່ານີ້?
3. ເຮັດແນວໃດພວກເຮົາຈຶ່ງຈະເປັນຄົນສຳນຶກເຖິງຄວາມເສັຽຫາຍ ແລະຕຽມພ້ອມໃນການປົກປ້ອງຊີວິດແຕ່ງງານຂອງພວກເຮົາຈາກການເປັນຂວາກໜາມທີ່ເປັນພາກສ່ວນໃນຄວາມບໍ່ສັດຊື່ໄດ້?

**ພຣະຄັມພີແຫ່ງຄວາມຈິງ**

- ຄູ່ສາມີພັລຍາຄຣິສຕຽນທີ່ຮັບເອົາການແນະນຳຂອງພຣະຄຣິດເຣື່ອງຣາຄະຕັນຫາ ໂດຍການບໍ່ຍິນຍອມຕໍ່ການຫລິ້ນຊູ້ທາງຈິດໃຈ ແລະການເອົາຕົວໃຫ້ຫລຸດພົ້ນຈາກມັນໄດ້.
- ຜູ້ຊາຍແລະເມັຽຂອງລາວ ຜູ້ທີ່ຕ້ອງການໃຫ້ມີກຽດໃນອົງພຣະຜູ້ເປັນເຈົ້າຕໍ່ການສົມຣົດຂອງເຂົາເຈົ້າ ໃຫ້ຕັດສິນໃຈເລືອກເອົາຫົນທາງຂອງພຣະອົງ.
- ຂໍໃຫ້ສາມີແລະພັລຍາໃຊ້ເວລາອະທິຖານຕໍ່ພຣະເຈົ້າສຳລັບການຊົງນຳ ແລະຄວາມເຂັ້ມແຂງ ແລ້ວເຂົາເຈົ້າຈະສາມາດຫລີກຈາກອັນຕະຣາຍທີ່ຈະມາທຳລາຍຊີວິດສົມຣົດໄດ້.